ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)
ໃນວັນທີ ແລະສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບງວດເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 30 ກັນຍາ 2022 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ທ່ານ ບ່ານ໊ຍ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ
3 ພະຈິກ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2022

	ບິດ ອະທິບາຍ	ທີ່ບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	14,322,563,777	13.057.187.126
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ			
ແລະ ລຸກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	50,518,812,099	47.696.091.192
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	6	203,096,323	262.786.334
ຊັບສິນໝຸນວຽນອື່ນໆ	7	958,644,046	503.095.189
ລວມຊັບສິນໝຸນວຽນ		66,003,116,245	61.519.159.841
ຊັບສິນບໍ່ໝຸນວຽນ			
ເງິນຝາກຄ້ຳປະກັນເງິນກູ້	8	2,000,000,000	-
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2,000,002,700	2.000.002.700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ລຸກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	34,876,480,418	32.091.186.121
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	9	702,943,946	939.382.351
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	10	148,576,091	205.780.698
ຊັບສິນບໍ່ໝຸນວຽນ ອື່ນໆ		83,380,976	174.497.244
ລວມຊັບສິນບໍ່ໝຸນວຽນ		39,811,384,131	35.410.849.114
ລວມຊັບສິນ		105,814,500,376	96.930.008.955

ທ່ານ ມາມີ ຕຣີລິດວົງ
ຜູ້ອຳນວຍການໃຫ່ຍ

ວັນທີ: 3 ພະຈິກ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 3 ພະຈິກ 2022

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 6 - 14 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2022

	ບົດອະທິບາຍ	ທີ່ບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	11	3,104,242,515	4,580,752,344
ໜີ້ຕ້ອງສົ່ງອາກອນລາຍໄດ້		2,415,133,959	2,041,935,197
ເງິນກູ້ຢືມໄລຍະຍາວ - ສັດສ່ວນໝຸນວຽນ	12	21,407,986,929	-
ໜີ້ສິນໝຸນວຽນອື່ນໆ		46,316,263	44,011,600
ລວມໜີ້ສິນໝຸນວຽນ		26,973,679,666	6,666,699,141
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	12	9,418,840,886	17,894,400,000
ໜີ້ສິນບໍ່ໝຸນວຽນອື່ນໆ		220,075,000	217,250,000
ລວມໜີ້ສິນບໍ່ໝຸນວຽນ		9,638,915,886	18,111,650,000
ລວມໜີ້ສິນ		36,612,595,552	24,778,349,141
ທຶນເຈົ້າຂອງ			
ທຶນຈົດທະບຽນ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຄ້າງສະສົມຕາມລະບຽບການ		4,785,832,107	4,785,832,107
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		11,583,405,167	14,533,160,157
ລວມທຶນ		69,201,904,824	72,151,659,814
ລວມໜີ້ສິນ ແລະ ທຶນເຈົ້າຂອງ		105,814,500,376	96,930,008,955

ທ່ານ ບານິນ ຕຣີສິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 3 ພະຈິກ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 3 ພະຈິກ 2022

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 6 - 14 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບົດອະທິບາຍ	ທີ່ຫວນຄືນ 1 ກໍລະກົດ -30 ກັນຍາ 2022 ກີບ	ທີ່ຫວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		7,602,364,887	6,585,268,972
ລວມລາຍຮັບ		7,602,364,887	6,585,268,972
ລາຍຮັບອື່ນ		441,255,786	310,664,587
ລາຍຈ່າຍໃນການບໍລິຫານ		(3,270,648,979)	(3,631,209,787)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(466,535,945)	(357,517,148)
ຂາດທຶນສຸດທິຈາກອັດຕາແລກປ່ຽນ	13	(2,556,611,085)	(423,579,136)
ກຳໄລຈາກການດຳເນີນງານ		1,749,824,664	2,483,627,488
ລາຍຈ່າຍການເງິນ		(997,468,024)	(505,293,850)
ກຳໄລສຸດທິກ່ອນອາກອນ		752,356,640	1,978,333,638
ລາຍຈ່າຍອາກອນ	15	(699,524,381)	(354,966,758)
ກຳໄລສຸດທິ		52,832,259	1,623,366,880
ກຳໄລ ຕໍ່ຮຸ້ນ			
ກຳໄລ ພື້ນຖານ ຕໍ່ຮຸ້ນ	16	0.13	4.06

ທ່ານ ບຸນມີ ຄຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 3 ພະຈິກ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 3 ພະຈິກ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຈັດສັນ ຕັ້ງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2021		40,000,000,000	12,832,667,550	4,026,672,320	12,245,242,896	69,104,582,766
ກຳໄລ ສຳລັບໄລຍະສາມເດືອນ	16	-	-	-	1,623,366,880	1,623,366,880
ໃນວັນທີ 30 ກັນຍາ 2021		40,000,000,000	12,832,667,550	4,026,672,320	13,868,609,776	70,727,949,646
ໃນວັນທີ 1 ມັງກອນ 2022		40,000,000,000	12,832,667,550	4,785,832,107	11,530,572,908	69,149,072,565
ກຳໄລ ສຳລັບໄລຍະສາມເດືອນ	16	-	-	-	52,832,259	52,832,259
ໃນວັນທີ 30 ກັນຍາ 2022		40,000,000,000	12,832,667,550	4,785,832,107	11,583,405,167	69,201,904,824

ທ່ານ ມາມີ ຕຣີລິກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 3 ພະຈິກ 2022

ທ່ານ ທອງຖະຫວັນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 3 ພະຈິກ 2022

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 6 - 14 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບົດອະທິບາຍ	ທີ່ບທວນຄືນ 1 ກໍລະກົດ -30 ກັນຍາ 2022 ກີບ	ທີ່ບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		752,356,640	1,978,333,638
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		466,535,945	357,517,148
ຄ່າຫາຍໜ້າລໍ້ຖ້າຕັດບັນຊີ		867,733,386	968,159,301
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		(5,000,000)	(48,750,000)
ຄ່າຫຼຸ້ຍຫ້ຽນ		140,213,596	124,394,943
ລາຍຈ່າຍດອກເບ້ຍ		997,468,024	505,293,850
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		2,375,789,612	407,983,954
ກຳໄລ ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**5,595,097,203**	**4,292,932,834**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		(411,838,076)	(1,128,658,141)
ຊັບສິນຖືໄວ້ເພື່ອຂາຍ		21,914,730	406,540,382
ຊັບສິນບໍ່ໝຸນວຽນອື່ນໆ		(283,069,161)	(77,120,538)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		957,903,690	(264,164,205)
ໜີ້ສິນໝຸນວຽນອື່ນໆ		4,608,243	80,255
ໜີ້ສິນບໍ່ໝຸນວຽນອື່ນໆ		(5,625,000)	19,750,000
ເງິນສົດຈາກກິດຈະກຳດຳເນີນງານ		**5,878,991,629**	**3,249,360,587**
ລາຍຈ່າຍຄ່າຫາຍໜ້າ		(591,356,560)	(908,350,000)
ລາຍຈ່າຍດອກເບ້ຍ		(1,000,253,784)	(505,293,850)
ລາຍຈ່າຍອາກອນ		(459,383,569)	(440,000,000)
ເງິນສົດສຸດທິຈາກ/(ໃຊ້ໄປໃນ)ກິດຈະກຳດຳເນີນງານ		**3,827,997,716**	**1,395,716,737**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ມີຕົວຕົນ		(62,967,060)	(103,687,150)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		**(62,967,060)**	**(103,687,150)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດໄດ້ຮັບຈາກເງິນກູ້ຢືມ		-	4,083,200,000
ຈ່າຍຄືນເງິນກູ້ຢືມ		(371,434,743)	-
ເງິນສົດສຸດທິຈາກ(ໃຊ້ໄປໃນ)ກິດຈະກຳການເງິນ		**(371,434,743)**	**4,083,200,000**
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**3,393,595,913**	**5,375,229,587**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ		10,925,398,148	4,634,812,131
ກຳໄລ/(ຂາດທຶນ) ໃນການແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		3,569,716	16,277,883
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	4	**14,322,563,777**	**10,026,319,601**

ທ່ານ ...
ຜູ້ອຳນວຍການໃຫຍ່

ວັນທີ: 3 ພະຈິກ 2022

ທ່ານ ທອງຖະໜອ້ນ ທອງແຖມ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 3 ພະຈິກ 2022

1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກແລະລົດໄຖ

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 3 ພະຈິກ 2022.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນການປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2021.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນຍົນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ຕັດສິນໃຈທີ່ມີສຳລະສຳຄັນຂອງນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ເງິນສົດໃນມື	30.261.080	41.035.623
ເງິນສົດໃນທະນາຄານ	14.292.302.697	13.016.151.503
ລວມ	**14.322.563.777**	**13.057.187.126**

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1,289,149,966	1.142.390.791
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	53,350,526,266	49.443.374.420
	54.639.676.232	**50.585.765.211**
ເພີ່ມ ຕົ້ນທຶນທາງກົງ	1.249.119.792	1.366.237.006
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(5.369.983.925)	(4.255.911.025)
	50.518.812.099	**47.696.091.192**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	533.401.809	323.369.606
ລູກໜີ້ສິນເຊື່ອຜ່ອນຊຳລະ	33.904.968.135	31.017.898.812
	34.438.369.944	**31.341.268.418**
ເພີ່ມ ຕົ້ນທຶນທາງກົງ	1.135.740.890	1.293.716.612
ຫັກ ເງິນແຮະບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(697.630.416)	(543.798.909)
	34.876.480.418	**32.091.186.121**
ລວມ	**85.395.292.517**	**79.787.277.313**

5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ກັນຍາ 2022, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ບໍ່ຄົບກຳນົດ	68.676.525.552	59.043.910.017
1 - 3 ເດືອນ	13.372.289.132	16.691.343.418
4 - 6 ເດືອນ	1.033.905.941	1.812.386.831
7 - 12 ເດືອນ	1.693.361.013	1.394.089.145
ເກີນ 12 ເດືອນ	4.301.964.538	2.985.304.218
	89.078.046.176	**81.927.033.629**
ເພີ່ມ ຕົ້ນທຶນທາງກົງ	2.384.860.682	2.659.953.618
ຫັກ ເງິນແຮບ້ອງໜີ້ຕ້ອງຮັບທີ່ເກັບຄືນບໍ່ໄດ້	(6.067.614.341)	(4.799.709.934)
ລວມ	**85.395.292.517**	**79.787.277.313**

6 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລົດຈັກ	221.846.323	291.536.334
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(18.750.000)	(28.750.000)
ລວມ	**203.096.323**	**262.786.334**

7 ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ລາຍຈ່າຍລ່ວງໜ້າ	384.169.203	449.969.869
ຊຳລະເງິນລ່ວງໜ້າ	508.638.070	42.757.320
ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ	33.990.426	-
ອື່ນໆ	31.846.347	10.368.000
ລວມ	**958.644.046**	**503.095.189**

8 ເງິນຝາກຄ້ຳປະກັນເງິນກູ້

ແມ່ນເງິນທີ່ບໍ່ສາມາດນຳໃຊ້ໄດ້ ເຊິ່ງລວມມີບັນຊີເງິນຝາກມີກຳນົດ 1.500 ລ້ານກີບ ແລະ ບັນຊີກະແສລາຍວັນທີ່ຕ້ອງມີເງິນຂັ້ນຕ່ຳ 500 ລ້ານກີບ ທີ່ໃຊ້ເປັນເງິນຄ້ຳປະກັນສຳລັບການກູ້ຢືມນຳທະນາຄານລາວ-ຝຣັ່ງ ຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 12).

9 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 - ກວດສອບ	939.382.351
ເພີ່ມຂຶ້ນ	120.374.387
ຫັກ: ຄ່າຫຼ້ຽຫ້ຽນ	(356.812.792)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2022 - ທົບທວນຄືນ	**702.943.946**

10 ຊັບສິນບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2022 - ກວດສອບ	205.780.698
ເພີ່ມຂຶ້ນ	-
ຫັກ: ຄ່າເສື່ອມມູນຄ່າ	(57.204.607)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2022 - ທົບທວນຄືນ	**148.576.091**

11 ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສົ່ງການຄ້າ	1.963.253.500	2.727.309.000
ລາຍຈ່າຍຄ້າງຈ່າຍ	1.081.012.024	1.451.698.670
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ17)	-	313.206.000
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ17)	-	38.750.000
ໜີ້ຕ້ອງສົ່ງອາກອນ	59.976.991	49.788.674
ລວມ	**3.104.242.515**	**4.580.752.344**

12 ເງິນກູ້ຢືມ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໝູນວຽນ	21.407.986.929	-
ບໍ່ໝູນວຽນ	9.418.840.886	17.894.400.000
ລວມ	**30.826.827.815**	**17.894.400.000**

ລາຍການເຄື່ອນໄຫວຂອງເງິນກູ້ຢືມ ສຳລັບໄລຍະເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	17.894.400.000	11.936.400.000
ເງິນກູ້ຢືມທີ່ເພີ່ມ	5.000.000.000	4.083.200.000
ຊຳລະເງິນກູ້ຢືມຄືນ	(614.772.185)	-
ຂາດທຶນຈາກການຕີມູນຄ່າການແລກປ່ຽນ	8.547.200.000	1.874.800.000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**30.826.827.815**	**17.894.400.000**

ວັນທີ 31 ມີນາ 20221, ບໍລິສັດໄດ້ເຊັ່ນສັນຍາກູ້ຢືມເງິນກັບທະນາຄານ ລາວ-ຝຣັ່ງ (BFL) ມູນຄ່າ 5 ຕື້ກີບ, ໃນໄລຍະ 3 ປີ ແລະ ດອກເບ້ຍ 9% ຕໍ່ປີ (ເງິນຕົ້ນ ແລະ ດອກເບ້ຍຊຳລະລາຍເດືອນ), ເລີ່ມຕັ້ງແຕ່ ວັນທີ 8 ພຶດສະພາ 2022 ຫາ 8 ເມສາ 2025.

ຍອດເງິນກູ້ນີ້ແມ່ນຄ້ຳປະກັນດ້ວຍບັນຊີເງິນຝາກມີກຳນົດ ແລະເງິນຝາກອະເສລາຍວັນຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 8)

13 ຂາດທຶນສຸດທິຈາກອັດຕາແລກປ່ຽນ

ໃນໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2022, ສະກຸນເງິນກີບ (LAK) ແມ່ນອ່ອນຄ່າເມື່ອທຽບກັບເງິນໂດລາສະຫະລັດ (US Dollars) ດັ່ງນັ້ນ, ຈຶ່ງເກີດມີຜົນກະທົບທີ່ເປັນສາລະສຳຄັນໂດຍຂາດທຶນຈາກອັດຕາແລກປ່ຽນຈາກຍອດເງິນກູ້ຢືມໄລຍະຍາວເຊິ່ງ ເປັນເງິນໂດລາສະຫະລັດ (US Dollars).

14 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2020 ໃນວັນທີ 27 ເມສາ 2021, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2020 ໃນມູນຄ່າ 155 ກີບຕໍ່ຮຸ້ນ, ລວມມູນຄ່າທັງໝົດ 6.200 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 774.478.318 ກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2021 ໃນວັນທີ 28 ເມສາ 2022, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກ ກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2021 ໃນມູນຄ່າ 57 ກີບຕໍ່ຮຸ້ນ (ກ່ອນການປ່ຽນແປງມູນຄ່າໃນໃບຮຸ້ນ ຂອງບໍລິສັດ ຈາກລາຄາ 1.000 ກີບ ມາເປັນ 100 ກີບຕໍ່ຮຸ້ນ) ຫຼື ມູນຄ່າ 5,7 ກີບຕໍ່ຮຸ້ນ (ຫຼັງການປ່ຽນແປງມູນຄ່າໃນໃບຮຸ້ນ) ລວມມູນຄ່າທັງ ໝົດ 2.280 ລ້ານກີບ ແລະ ຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 759.159.787 ກີບ.

15 ອາກອນລາຍໄດ້

ບໍລິສັດໄດ້ຮັບສິດທິພິເສດຕາມກົດໝາຍສ່ວຍສາອາກອນລາວໂດຍການຫຼຸດອັດຕາອາກອນກຳໄລ 5% ຂອງອັດຕາປົກກະຕິເປັນ ເວລາ 4ປີ ນັບຕັ້ງແຕ່ວັນທີຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ວັນທີ 13 ມິຖຸນາ 2018.

ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 259 ທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020 ເປັນຕົ້ນມາ, ບໍລິສັດໄດ້ຄິດໄລ່ອາກອນກຳໄລ ທີ່ຕ້ອງເສຍອາກອນໃນອັດຕາ 13% ເຊິ່ງຖືເປັນສິດທິພິເສດສຳລັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍຫຼັງທີ່ພິຈາລະນາລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ສາມາດຫັກອອກໄດ້ ຕາມກົດໝາຍສ່ວຍສາອາກອນລາວ, ອັດຕາດັ່ງກ່າວແມ່ນໃຊ້ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2022.

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດ ຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນ ຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສິ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

16 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລ ພື້ນຖານ ຕໍ່ຮຸ້ນ ແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນຂອງຮຸ້ນສາມັນ ທີ່ອອກ ໃນລະຫວ່າງໄລຍະ, ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າໃນໃບຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

	ທົບທວນຄືນ 1 ກໍລະກົດ -30 ກັນຍາ	
	2022	2021
	ກີບ	ກີບ
ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ)	52.832.258	1.623.366.880
ຈຳນວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ)	400.000.000	400.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	0,13	4,06

17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ, ມີດັ່ງນີ້:

	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2022 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ
ການຊື້ສິນຄ້າ ແລະ ບໍລິການ:		
ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ		
ຄ່າຄ້ຳປະກັນ	817.348.058	459.702.473
	817.348.058	**459.702.473**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ຊື້ຊັບສິນເຊົ່າສິນເຊື່ອ	-	1.255.300.000
ຈ່າຍຄ່ານາຍໜ້າ	-	71.250.000
ລາຍຈ່າຍອື່ນໆ	-	25.110.000
	-	**1.351.660.000**
ລວມ	**817.348.058**	**1.811.362.473**

17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

* ພາກສ່ວນທີ່ກ່ຽວຂ້ອງອື່ນໆແມ່ນທຸລະກຳລະຫວ່າງບໍລິສັດ ແລະ ຜູ້ສະໜອງທີ່ມີເຈົ້າຂອງແມ່ນໜຶ່ງໃນຄະນະບໍລິຫານຂອງ ບໍລິສັດ. ເຊິ່ງສະພາບໍລິຫານຊຸດດັ່ງກ່າວໄດ້ສິ້ນສຸດວາລະໃນວັນທີ 28 ເມສາ 2022. ອີງຕາມລະບຽບການກ່ຽວກັບ ພາກສ່ວນທີ່ກ່ຽວຂ້ອງທີ່ອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບລົງວັນທີ 26 ຕຸລາ 2016, ຜູ້ສະໜອງບໍ່ໄດ້ຖືກ ພິຈາລະນາວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

ຂ. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ ສິນຄ້າ/ບໍລິການ

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ໜີ້ຕ້ອງສົ່ງ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ*		
ໜີ້ຕ້ອງສົ່ງການຄ້າ	-	313.206.000
ໜີ້ຕ້ອງສົ່ງອື່ນໆ	-	38.750.000
ລວມ	**-**	**351.956.000**

* ອີງຕາມ ບົດອະທິບາຍ ກ ຂ້າງເທິງ, ນັບແຕ່ 29 ເມສາ 2022 ເປັນຕົ້ນໄປທຸລະກຳ ແລະ ຍອດຄ້າງຊຳລະຈາກຜູ້ສະໜອງ ດັ່ງກ່າວຈະສະແດງພາຍໃຕ້ໜີ້ຕ້ອງສົ່ງການຄ້າ.

ຄ. ຄ່າຕອບແທນຜູ້ບໍລິຫານຫຼັກ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2022 ກີບ	ທົບທວນຄືນ 1 ກໍລະກົດ -30 ກັນຍາ 2021 ກີບ
ເງິນເດືອນ ແລະ ອື່ນໆ	210.750.000	202.750.000

18 ພາລະຜູກພັນ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີຫ້ອງການ

ໃນວັນທີ 30 ກັນຍາ 2022 ແລະ ວັນທີ 31 ທັນວາ 2021, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ພາຍໃນ 1 ປີ	276.979.834	126.981.858
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.499.042.141	1.340.322.412
ເກີນ 5 ປີ	-	31.006.070
ລວມ	**1.776.021.975**	**1.498.310.340**

19 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນກາງປີ ຂອງບໍລິສັດ.